ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
MODERN QUICK RELIABLE

ສຳນັກງານໃຫຍ່

ເລກທີ: 0377 /ທຄຕລ...2025........
ນະຄອນຫຼວງວຽງຈັນ, ວັນທີ:.....06 FEB 2025.........

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາ ບໍລິສັດຜູ້ສະໜອງ ແລະ ຫ້າງຮ້ານຈຳໜ່າຍເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໄອທີ .

**ເລື່ອງ:** ແຈ້ງເຊີນເຂົ້າຮ່ວມຍື່ນຊອງປະມູນລາຄານ້ຳມຶກ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ຂໍແຈ້ງມາຍັງບັນດາບໍລິສັດ ແລະ ຫ້າງຮ້ານຕົວແທນຈຳໜ່າຍເຄື່ອງໃຊ້ຫ້ອງການ ແລະ ເຄື່ອງໄອທີ ຊາບວ່າ ທຄຕລ ມີຄວາມຕ້ອງການນ້ຳມຶກ ເພື່ອມານຳໃຊ້ເຂົ້າໃນວຽກງານວິຊາສະເພາະຂອງ ທະນາຄານ ຈຶ່ງໄດ້ແຈ້ງເຊີນມາຍັງທ່ານເພື່ອຍື່ນຊອງເຂົ້າຮ່ວມປະມູນລາຄາ ດັ່ງມີລາຍລະອຽດຂ້າງລຸ່ມນີ້:

❖ **<u>ລາຄານ້ຳມຶກຢູ່ລະດັບ Grade A (ຍີ່ຫໍ້ Lasuprint ຫຼື Asta )</u>**

| ລ/ດ | ລາຍການ | ຈຳນວນ | ຍີ່ຫໍ້ | ສະເລ່ຍການນຳໃຊ້ເດືອນ/ກ່ອງ |
|---|---|---|---|---|
| 1 | Toner Replacement Ribbon | 1 | Olivetti | 100 |
| 2 | Toner HP 17A-CF217A | 1 | Lasuprint ຫຼື Asta ( Grade A ) | 4 |
| 3 | Toner HP Laserjet 30 X | 1 | | 50 |
| 4 | Drum CF232A | 1 | | 145 |
| 5 | Toner Brother TN 433/451 BK, | 1 | | 1 |
| | Toner Brother TN 433/451 C | 1 | | 1 |
| | Toner Brother TN 433/451 M | 1 | | 1 |
| | Toner Brother TN 433/451 Y | 1 | | 1 |
| 6 | Toner Brother TN 263/267 BK | 1 | | 7 |
| | Toner Brother TN 263/267 C | 1 | | 4 |
| | Toner Brother TN 263/267 M | 1 | | 4 |
| | Toner Brother TN 263/267 Y | 1 | | 4 |
| 7 | Toner Brother TN 269 BK | 1 | Original | 1 |
| | Toner Brother TN 269 C | 1 | | 1 |
| | Toner Brother TN 269 M | 1 | | 1 |
| | Toner Brother TN 269 Y | 1 | | 1 |

- **ເອກະສານ ຊອງທີ 1:**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດຈຳໜ່າຍເຄື່ອງໃຊ້ຫ້ອງການ, ດຳເນີນທຸລະກິດ 01 ປີຂຶ້ນໄປ, ສຳເນົາໃບທະບຽນວິສາຫະກິດ, ໃບຢັ້ງຢືນການເສຍອາກອນປີ 2022,2023,2024.
2. ເອກະສານລາຍລະອຽດສະເປັກສິນຄ້າ, ການຮັບປະກັນສິນຄ້າ, ໄລຍະເວລາການຈັດສົ່ງສິນຄ້າ ແລະ ຂໍ້ມູນຕ່າງໆ ຕາມ format ທີ່ຕິດຄັດມາພ້ອມນີ້.

3. ເອກະສານຂ້າງເທິງແມ່ນໃຫ້ຍື່ນກ່ອນ ວັນຄານ ວັນທີ 14/02/2025 ເວລາ 11:00 ໂມງ ໂດຍສົ່ງຟາຍເຂົ້າ E-mail: procurement@bcel.com.la .

- **ເອກະສານ ຊອງທີ 2: (ປິດຊອງ)**

1. ໃບສະເໜີລາຄາໃຫ້ລະບຸລາຄາ/ຫົວໜ່ວຍແຕ່ລະລາຍການໃຫ້ລະອຽດ ແລະ ຕ້ອງລວມມູນຄ່າອາກອນທັງໝົດເປັນສະກຸນເງິນກີບໃຫ້ຄົບຖ້ວນ.
2. ໃນວັນຄານ ວັນທີ 25/02/2025 ເວລາ 09:00 ໂມງ ແມ່ນມື້ເປີດຊອງປະມູນ ສະນັ້ນ, ໃຫ້ຜູ້ສະໜອງທີ່ຜ່ານການຄັດເລືອກຈາກເອກະສານຊອງທີ 1 ມາຍື່ນຊອງລາຄາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 5 ອາຄານ C.
3. ຜູ້ສະໜອງຕ້ອງວາງເງິນຄໍ້າປະກັນການປະມູນຢ່າງໜ້ອຍ 10% ຂອງມູນຄ່າທັງໝົດ ໂດຍໜັງສືຄໍ້າປະກັນທີ່ອອກໂດຍທະນາຄານພາຍໃນ ສປປ ລາວ **(ວັນໝົດອາຍຸໜັງສືຄໍ້າປະກັນຕ້ອງເຖິງ ວັນທີ 30/05/2025)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄໍ້າປະກັນດັ່ງກ່າວຄືນ.
4. ທຄຕລ ຂໍສະຫງວນສິດ ປະຕິເສດບໍລິສັດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

## II. ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:

1. ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຮັບຜິດຊອບຄ່າທຳນຽມໃນການຈົດທະບຽນສັນຍາ.
2. ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ແມ່ນຕ້ອງຮັບຜິດຊອບຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 10% ຂອງມູນຄ່າລວມທີ່ສະເໜີປະມູນ.
3. ການຊຳລະແມ່ນຊຳລະ 100% ຂອງມູນຄ່າສັ່ງຊື້ແຕ່ລະງວດ ພາຍໃນ 25 ວັນ ພາຍຫຼັງກວດກາຄວາມຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

**ຜູ້ອຳນວຍການ**

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

**ນ. ສາຍລະໝອນ ຈັນທະຈັກ**

ຕິດຕໍ່ພົວພັນ:
021 213200 ຕໍ່ 414 ( ໂມງລັດຖະການ )

## (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ .....................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດຳເນີນທຸລະກິດ 2021 | ໄລຍະເວລາໃນການດຳເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກຳນົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະແຈ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .........................

ຜູ້ອຳນວຍການບໍລິສັດ

ຜູ້ປະສານງານບໍລິສັດ:

ຊື່:

ໂທ: